**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສານປະຊາຊົນສູງສຸດ

ເລກທີ 01 /ສປສສ

ນະຄອນຫຼວງວຽງຈັນ, ວັນທີ 29/01 / 2014

# ຄໍາແນະນໍາ

## ຂອງປະທານສານປະຊາຊົນສູງສຸດ

**ເຖິງ:** ບັນດາ ຫົວໜ້າຄະນະສານ ຂອງສານປະຊາຊົນສູງສຸດ, ປະທານສານປະຊາຊົນທ້ອງຖິ່ນ ແລະ ສານທະຫານທຸກຂັ້ນ ໃນຂອບເຂດທົ່ວປະເທດ

**ເລື່ອງ:** ຫຼັກຊັບປະກັນໃນການປ່ອຍຕົວພາງ

**ອີງຕາມ** ມາດຕາ 38 ຂອງກົດໝາຍວ່າດ້ວຍສານປະຊາຊົນ ສະບັບປັບປຸງ ປີ 2009;

**ອີງຕາມ** ມາດຕາ 143 ຂອງກົດໝາຍວ່າດ້ວຍການດໍາເນີນຄະດີອາຍາ ສະບັບປັບປຸງ ປີ 2012.

**ປະທານສານປະຊາຊົນສູງສຸດ ອອກຄໍາແນະນໍາ ດັ່ງນີ້:**

1. ລຶບລ້າງຄໍາແນະນໍາ ສະບັບເລກທີ 726/ສປສສ, ລົງວັນທີ 10 ທັນວາ 1997 ຂອງປະທານສານປະຊາຊົນສູງສຸດ ກ່ຽວກັບຫຼັກຊັບປະກັນ ໃນການປ່ອຍຕົວພາງ;
2. ໃຫ້ປະຕິບັດຕາມ ມາດຕາ 143 ຂອງກົດໝາຍວ່າດ້ວຍການດໍາເນີນຄະດີອາຍາ ສະບັບປັບປຸງ ປີ 2012.

ເມື່ອໄດ້ຮັບຄໍາແນະນໍາສະບັບນີ້ແລ້ວ ຈົ່ງນໍາໄປເຜີຍແຜ່ໃຫ້ພະນັກງານ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ ເພື່ອຈັດຕັ້ງປະຕິບັດຢ່າງເຂັ້ມງວດ.

**ປະທານສານປະຊາຊົນສູງສຸດ**

ປະທານ

ຄໍາພັນ ສິດທິດໍາພາ

ບ່ອນສົ່ງ:

- ປະທານ, ຮອງປະທານ ສານປະຊາຊົນສູງສຸດ ທ່ານລະ 1 ສະບັບ (ເພື່ອລາຍງານ);
- ຄະນະສານ ຂອງສານປະຊາຊົນສູງສຸດ, ສານປະຊາຊົນທ້ອງຖິ່ນບ່ອນລະ 1 ສະບັບ (ເພື່ອປະຕິບັດ);
- ບັນດາກົມ, ຫ້ອງການ ແລະ ສະຖາບັນຄົ້ນຄວ້າ-ຝຶກອົບຮົມ ບ່ອນລະ 1 ສະບັບ (ເພື່ອຊາບ);
- ສໍາເນົາໄວ້ 2 ສະບັບ.